**ບົດຄຳປາໄສຂອງທ່ານ ພູ ຣາຊະພົນ,ເອກອັກຄະລັດຖະທູດ ສປປ ລາວ**
**ກ່າວໃນໂອກາດພິທີສະເຫລີມສະຫລອງ ວັນຄົບຮອບ 40 ປີ**
**ຂອງການພົວພັນການທູດລະຫວ່າງ ລາວ ກັບ ສະວີເດັນ**
**ທີ່ສະຕັອກໂຮມ, ວັນ ທີ 19 -10-2004**

ຮຽນພະນະທ່ານ Annika Söder ລັດຖະມົນຕີຊ່ວຍວ່າການກ/ຊ ການ ຕປທທີ່ນັບຖື,
ຮຽນ ທ່ານ ຍິງແລະ ທ່ານ ຊາຍ ທີ່ ຮັກແພງ,

ກ່ອນອື່ນໝົດ ຂ້າພະເຈົ້າຂໍສະແດງຄວາມຂອບໃຈນຳທ່ານໝົດທຸກຄົນທີ່ສະຫລະເວລາອັນມີຄ່າຂອງທ່ານມາຮ່ວມງານສະເຫລີມສະຫລອງວັນຄົບຮອບ 40 ປີ ຂອງ ການພົວພັນການທູດລະຫວ່າງ ລາວ ກັບ ສະວີເດັນຕາມການເຊີນຂອງຂ້າພະເຈົ້າ ແລະ ພັນລະຍາ ໃນຄ່ຳຄືນມື້ນີ້.

ເປັນເວລາ 40 ປີ ຜ່ານມາແລ້ວ, ຄືໃນວັນທີ 10-10-1964,ທີ່ລັດຖະບານ ລາວ ແລະລັດຖະບານ ສະວີເດັນ ໄດ້ຕົກລົງເຊັນເອກະສານກ່ຽວກັບການສ້າງຕັ້ງການພົວພັນການທູດນຳກັນ.

ນັບແຕ່ ລາວ ແລະ ສະວີເດັນໄດ້ມີການພົວພັນການທູດນຳກັນເປັນທາງການແລ້ວ,ການຮ່ວມມືລະຫວ່າງສອງປະເທດຂອງພວກເຮົາທາງດ້ານການເມືອງ,ດ້ານເສດຖະກິດ,ວັດທະນະທຳ-ສັງຄົມ,ທຸລະກິດ ແລະດ້ານອື່ນໆກໍໄດ້ເພີ່ມທະວີ ແລະຂະຫຍາຍຕົວຂຶ້ນເລື້ອຍໆ.

ຕະຫລອດໄລຍະ 40 ປີທີ່ຜ່ານມາ ປະຊາຊົນ ສອງຊາດຂອງພວກເຮົາ ໄດ້ອອກແຮງເສີມຂະຫຍາຍແລະພັດທະນາການພົວພັນຮ່ວມມືນຳກັນຢ່າງເປັນປົກກະຕິ. ລັດຖະບານແລະປະຊາຊົນສະວີເດັນໄດ້ໃຫ້ຄວາມສະຫນັບສະຫນູນ ແລະ ໃຫ້ການຊ່ວຍເຫລືອອັນປະເສີດແກ່ລັດຖະບານແລະປະຊາຊົນລາວໃນໄລຍະຕໍ່ສູ້ເພື່ອຍາດເອົາສັນຕິພາບ,ເອກະລາດແຫ່ງຊາດ,ປະຊາທິປະໄຕ ແລະ ເອກະພາບ ໃນເມື່ອກ່ອນ ກໍຄືໃນພາລະກິດ ການສ້າງສາພັດທະນາເສດຖະກິດ,ວັດທະນະທຳ-ສັງຄົມ ໃນປະຈຸບັນ.

ໃນຕົວຈິງແລ້ວລັດຖະບານສະວີເດັນໄດ້ໄຂສະຖານທູດສະວີເດັນທີ່ວຽງຈັນ ໃນປີ 1979 ແລະໄດ້ມີອຸບປະທູດປະຈຳການຢູ່ທີ່ວຽງຈັນຕິດຕໍ່ກັນ,ມາຮອດດຽວນີ້ ແມ່ນເປັນອຸບປະທູດສະວີເດັນຜູ້ທີ 11 ແລ້ວ

ແລະ ລັດຖະບານລາວກໍໄດ້ໄຂສະຖານທູດລາວຢູ່ສະຕົກໂຄມໃນປີ 1981
ແລະ ມີເອກອັກຄະລັດຖະທູດປະຈໍາການຢູ່ນີ້ເປັນທູດຜູ້ທີ 5 ແລ້ວ.

ການຕິດຕໍ່ພົວພັນ ແລະການຮ່ວມມືນໍາກັນ ລະຫວ່າງສອງປະເທດຂອງພວກເຮົາໄດ້ມີການຂະຫຍາຍຕົວເພີ່ມຂື້ນເລື້ອຍໆມັນສະແດງອອກໃນການແລກປ່ຽນຄະນະຜູ້ແທນນໍາກັນຫລາຍຄະນະ ແລະຫລາຍລະດັບ.

ໃນຈໍານວນຄະນະຜູ້ແທນທາງການທີ່ໄດ້ໄປ-ມາຢ້ຽມຢາມເຊິ່ງກັນແລະກັນຫລາຍຄະນະນັ້ນກໍມີເປັນຕົ້ນຄະນະຜູ້ແທນລັດຖະສະພາສະວີເດັນ,ນໍາໂດຍປະທານລັດຖະສະພາ, ພະນະທ່ານBirgitta Dhall, ການໄປຮ່ວມກອງປະຊຸມ ອາຊຽນ-ອີຢູທີ່ວຽງຈັນຂອງທ່ານ ຮອງນາຍົກລັດຖະມົນຕີຂອງສະວີເດັນ,ພະນະທ່ານ Lena Hjelm-Wallén , ຄະນະຜູ້ແທນກະຊວງຍຸຕິທໍາ ນໍາ ໂດຍ ພະນະທ່ານ Laila Freivalds ແລະຄະນະອື່ນອີກຫລາຍຄະນະ, ແລະໃນອາທິດຜ່ານມານີ້ເອງກໍມີຄະນະຜູ້ແທນຂັ້ນສູງນໍາໂດຍພະນະທ່ານ Annika Söder ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດເຊິ່ງໄປຮ່ວມພິທີສະເຫລີມສະຫລອງວັນສ້າງຕັ້ງການພົວພັນການການທູດລະຫວ່າງລາວ ແລະ ສະວີເດັນຢູ່ທີ່ວຽງຈັນ ,

ສ່ວນທາງຝ່າຍລາວກໍໄດ້ມີ ຄະນະຜູ້ແທນມາຢ້ຽມຢາມສະວີເດັນຫລາຍຄະນະເປັນຕົ້ນກໍແມ່ນຄະນະຜູ້ແທນນໍາໂດຍ ພະນະທ່ານ ສະຫມານ ວິຍະເກດ,ປະທານລັດຖະສະພາລາວ,ພະນະທ່ານ ອາຊາງ ລາວລີ,ຮອງນາຍົກລັດຖະມົນຕີ, ພະນະທ່ານສົມສະຫວາດ ເລັ່ງສະຫວັດ,ຮອງນາຍົກ,ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະຫລາຍໆຄະນະອີກ.

ນອກຈາກນັ້ນແລ້ວກໍໄດ້ມີນັກສຶກສາສະວີເດັນຈໍານວນນຶ່ງໄດ້ໄປຝຶກຫັດ ແລະຄົ້ນຄວ້າຢູ່ລາວແລະນັກສຶກສາລາວມາຮຽນຢູ່ທີ່ສະວີເດັນກໍເພີ່ມຂຶ້ນ; ປະຈຸບັນນີ້ມີນັກສຶກສາລາວຮຽນຂັ້ນ ປະລິນຍາຕີ 1 ຄົນ,ຂັ້ນປະລິນຍາໂທ 6 ແລະ ຂັ້ນປະລິນຍາເອກ 8 ຄົນ.

ທາງດ້ານທຸລະກິດກໍໄດ້ເລີ່ມມີການຮ່ວມມືກັນໂດຍໄດ້ຈັດຕັ້ງສະພາບໍລິຫານທຸລະກິດ ສະວີເດັນ-ລາວ ຂື້ນ ແລະ ຝ່າຍສະວີເດັນ ກັບຝ່າຍລາວກໍໄດ້ມີການແລກປ່ຽນຄະນະຜູ້ແທນນໍາກັນ.

ໃນປີ2003 ຜ່ານມາ,ສອງປະເທດຂອງພວກເຮົາໄດ້ຄ້າຂາຍຮ່ວມກັນລວມ
ມູນຄ່າເປັນເງິນທັງໝົດປະມານ 3 ລ້ານ USD . ສປປລາວ ໄດ້ສົ່ງເຄື່ອງນຸ່ງຫົ່ມ ແລະເຄື່ອງ
ເຟີນີເຈີ້ ໃຫ້ ສະວີເດັນ ແລະໄດ້ຊື້ຜະລິດພັນເຄື່ອງໃຊ້ສອຍຈາກສະວີເດັນ.

.

.ໃນດ້ານການທ່ອງທ່ຽວກໍມີນັກທ່ອງທ່ຽວສະວີເດັນໄປຢາມລາວເພີ່ມຈາກ 35 ຄົນໃນປີ1991, ຂື້ນເປັນ 1000 ຄົນ,ໃນປີ 1995, 4000 ຄົນ,ໃນປີ 2000 ແລະ 4500 ຄົນ,ໃນປີ 2003 ຜ່ານມານີ້.

ທາງດ້ານການຮ່ວມມືເພື່ອການພັດທະນາປະເທດສະວີເດັນໄດ້ເປັນປະເທດນຶ່ງນຳ
ໜ້າໃນການຊ່ວຍເຫລືອລາວໂດຍສະເພາະໃນຂະແໜງກະສິກຳ-ປ່າໄມ້,ຂະແໜງອຸດສະ
ຫະກຳ,ຄົມນາຄົມຂົນສົ່ງ,ການກໍ່ສ້າງພື້ນຖານໂຄງລ່າງ, ໂຄງການພັດທະນາຊົນນະບົດ,
ພະລັງງານໄຟຟ້ານ້ຳຕົກ,ຍຸດຕິທຳ, ສະຖິຕິ,ສິ່ງແວດລ້ອມ, ແຮງແຕກແນດ,ສາທາລະນະສຸກ,
ສຶກສາ,ສ້າງຊັບພະຍາກອນມະນຸດ.

ໂຄງການຮ່ວມມືຕ່າງໆທີ່ສະວີເດັນໄດ້ຊ່ວຍເຫລືອລາວນັ້ນໄດ້ເລີ່ມຕົ້ນມາແຕ່ປີ 1974 ແລະ
ກໍໄດ້ເຊັນກັນເປັນໄລຍະມາຢູ່ປະຈຳ,ພໍຈະສະຫລຸບໂດຍສັງລວມໄດ້ດັ່ງຕໍ່ລົງໄປນີ້ :

-1974-1984 ( 10 ປີ ) ລວມເປັນເງິນທັງໝົດ : 365 ລ້ານກູຣອນ
-1984-1994 ( 10 ປີ ) ------------------- : 808 ---
-1994-1998 ( 4 ປີ ) ------------------ : 400 ---
-1999-2003 ( 5 ປີ ) ----------------- : 675 ---

ລວມທັງໝົດແລ້ວນັບແຕ່ປີ 1974 ມາຮອດປີ 2003 ນີ້ ການຊ່ວຍ
ເຫລືອຂອງສະວີເດັນເປັນເງິນທັງໝົດປະມານ 2,3 ຕື້ ກູຣອນສະວີດິດ.

ແລະ -2004-2006 ( 3 ປີ ) ------------------- : 450 ---

ນອກຈາກນີ້ ແລ້ວ ສະວີເດັນໄດ້ໃຫ້ເງິນກູ້ຢືມອີກ ແລະ ກໍໄດ້ຊ່ວຍລາວ ຜ່ານອົງການຈັດຕັ້ງ
ສາກົນອື່ນໆອີກ ຄື : UNDP , UNICEF , FAO,WHO.
ບາງອົງການ ຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ( NGO ) ຂອງສະວີເດັນຄື ERIKSHJALPEN
ແລະ SHIA ກໍໄດ້ໃຫ້ການຊ່ວຍເຫລືອລາວ.

ທ່ານຍິງ ແລະ ທ່ານຊາຍທີ່ຮັກແພງ,

ພວກຂ້າພະເຈົ້າຕີລາຄາສູງ ຕໍ່ການສະໜັບສະໜູນ,ການຮ່ວມມື,ແລະ ການ

ຊ່ວຍເຫລືອດ້ານວັດຖຸ ແລະຈິດໃຈຂອງສະວີເດັນເຊິ່ງເປັນການປະກອບ ສ່ວນອັນສຳຄັນໃຫ້ແກ່ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນເລື້ອຍໆໂດຍອີງໃສ່ຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດເພື່ອນຳພາປະເທດຂອງພວກຂ້າພະເຈົ້າໃຫ້ ຫລຸດພົ້ນອອກຈາກສະພາບດ້ອຍພັດທະນາໃນປີ 2020,

ແລະພ້ອມກັນນີ້ຂ້າພະເຈົ້າກໍມີຄວາມຫວັງວ່າ ສ ປ ປ ລາວ ແລະ ສະວີເດັນ ຈະສືບຕໍ່ເສີມຂະຫຍາຍຄວາມເຂົ້າອົກເຂົ້າໃຈກັນແລະເຮັດໃຫ້ການຮ່ວມມືອັນດີລະຫວ່າງສອງປະເທດພວກເຮົາໄດ້ຮັບການຂະຫຍາຍຕົວຂຶ້ນໄປເລື້ອຍໆ ເພື່ອຜົນປະໂຫຍດຂອງປະຊາຊົນ ສອງຊາດພວກເຮົາ.

ຂ້າພະເຈົ້າຂໍຖືເອົາໂອກາດນີ້, ໃນນາມລັດຖະບານ ແລະ ປະຊາຊົນລາວ, ສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງແລະຂອບໃຈຢ່າງຈິງໃຈຕໍ່ລັດຖະບານ ແລະປະຊາຊົນສະວີເດັນທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າແກ່ປະເທດຊາດຂອງຂ້າພະເຈົ້າ.

ເນື່ອງໃນໂອກາດອັນເປັນປະຫວັດສາດນີ້, ຂ້າພະເຈົ້າຂໍອວຍພອນໄຊ ໃຫ້ແກ່ການພົວພັນແລະ ການຮ່ວມມື ລາວ - ສະວີເດັນ ຈົ່ງແຕກດອກອອກຜົນຍິ່ງໆຂຶ້ນໄປໃນອະນາຄົດ ແລະ ອວຍພອນໄຊອັນປະເສີດ ມາຍັ້ງທ່ານຫມົດທຸກຄົນທີ່ມາຮ່ວມງານນີ້ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນການປະຕິບັດຫນ້າທີ່ການງານອັນສູງສົ່ງຂອງພວກທ່ານແລະ ມີຄວາມສຸກໃນຊີວິດຕະຫລອດໄປ.

.

ຂໍໃຫ້ການຮ່ວມມື ແລະ ມິດຕະພາບ ລາວ - ສະວີເດັນ ຫມັ້ນຍືນ !

ຂໍຂອບໃຈ !